# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 8
## Rights and obligations
## ສິດ ແລະ ພັນທະຂອງຜູ້ລົງທຶນ

### 1. ສະພາບທົ່ວໄປກ່ຽວກັບສິດ ແລະ ພັນທະຂອງຜູ້ລົງທຶນຢູ່ ສປປ ລາວ

ປັດຈຸບັນ, ສະພາບການຂອງການລົງທຶນຢູ່ ສປປ ລາວ ກຳລັງມີທ່າອ່ຽງເພີ່ມຂຶ້ນຢ່າງແຮງຍ້ອນພື້ນຖານເສດຖະກິດປະເທດເຮົາກຳລັງຢູ່ໃນໄລຍະຂະຫຍາຍຕົວສູງ. ນອກຈາກນັ້ນ, ບັນດານະໂຍບາຍສົ່ງເສີມການລົງທຶນ ກໍໄດ້ຮັບການປັບປຸງໂດຍລັດຖະບານຢ່າງຕໍ່ເນື່ອງ ປີ 2016 ສາມາດເວົ້າໄດ້ວ່າແມ່ນປີທີ່ມີຄວາມສຳຄັນທີ່ສຸດໃນຂະບວນການ ດຶງດູດຜູ້ລົງທຶນໃຫ້ມີການລົງທຶນຢູ່ລາວຫຼາຍຂຶ້ນ, ໂດຍການປະກົດຕົວຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນປີ 2016, ຜ່ານການນຳໃຊ້ກົດໝາຍດັ່ງກ່າວ, ເຫັນວ່າມີຜົນສະທ້ອນ ແລະ ຊ່ວຍໃຫ້ຂັ້ນຕອນການລົງທຶນຂອງຜູ້ລົງທຶນມີຄວາມວ່ອງໄວ ແລະ ມີປະສິດທິພາບສູງຂຶ້ນກວ່າເກົ່າ.

ໜຶ່ງໃນຈຳນວນທີ່ຜູ້ລົງທຶນຈຳເປັນຕ້ອງໃສ່ໃຈແມ່ນສິດ ແລະ ພັນທະຂອງເຂົາເມື່ອເວລາລົງທຶນຢູ່ ສປປ ລາວ, ເວົ້າອີກຢ່າງໜຶ່ງກໍໝາຍຄວາມວ່າ ສິ່ງໃດທີ່ເຂົາສາມາດເຮັດໄດ້ ແລະ ສິ່ງໃດທີ່ເຂົາຕ້ອງໄດ້ເຮັດຕາມຂໍ້ກຳນົດຂອງກົດໝາຍຂອງ ສປປ ລາວ, ເຂົ້າໃຈແຈ້ງບັນຫາດັ່ງກ່າວນີ້ ຈະເປັນການຊ່ວຍໃຫ້ຜູ້ລົງທຶນສະບາຍໃຈ ໃນການຈັດຕັ້ງປະຕິບັດ ແລະ ຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງການເຄື່ອນໄຫວການລົງທຶນ.

ໃນຕົວຈິງ ສະພາບການປະຕິບັດສິດ ແລະ ພັນທະຂອງຜູ້ລົງທຶນ ຢູ່ ສປປ ລາວ ແມ່ນໄດ້ປະຕິບັດຕາມກົດໝາຍສົ່ງເສີມການລົງທຶນ, ກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນກົດໝາຍວ່າດ້ວຍພາສີ, ອາກອນ, ບັນດາລະບຽບການ, ຂໍ້ຕົກລົງຕ່າງໆຕາມອົງການທີ່ມີສິດອຳນາດວາງອອກໃນແຕ່ລະໄລຍະຕາມສະພາບການຕົວຈິງຂອງການຄຸ້ມຄອງການເຄື່ອນໄຫວລົງທຶນຢູ່ ສປປ ລາວ.

### 2. ສິດຂອງຜູ້ລົງທຶນ

ໃນຕົວຈິງ, ສິດທີ່ຜູ້ລົງທຶນຈະໄດ້ຮັບຈາກລັດຖະບານ ຫຼື ກົດໝາຍ ສປປ ລາວ ແມ່ນ ລົງທຶນໃນທຸກຂະແໜງການ ແລະ ທຸກເຂດລົງທຶນ ທີ່ບໍ່ຫວງຫ້າມຕາມກົດໝາຍຂອງ ສປປ ລາວ; ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ; ຂໍສຳປະທານໂຄງການຈາກລັດທະບານ ຫຼື ອົງການປົກ ຄອງທ້ອງຖິ່ນຕາມແຕ່ລະກໍລະນີເພື່ອພັດທະນາໂຄງການໃດໜຶ່ງ; ຂໍສຳປະທານສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະຈາກລັດຖະບານ;ສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນຢູ່ ສປປ ລາວ; ຂໍປ່ຽນວັດຖຸປະສົງ ຫຼື ກິດຈະການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນຫາກບໍ່ມີປະສິດທິຜົນ ເນື່ອງມາຈາກການປ່ຽນແປງດ້ານນະໂຍບາຍ ຫຼື

ລະບຽບກົດໝາຍຂອງລັດ; ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ;ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັບຊອບທຳທີ່ໄດ້ຮັບມາຈາກການລົງທຶນຂອງຕົນ, ເຊັ່ນ: ສາມາດໂອນ, ສາມາດມອບ.....

ຜູ້ລົງທຶນໄດ້ຮັບການອຳນວຍຄວາມສະດວກຈາກລັດໃນດ້ານຕ່າງໆໃນການລົງທຶນຂອງຕົນ;ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການສຳປະທານເຊັ່ນ: ສິດໃຊ້, ເປັນຫຼັກຊັບຄ້ຳປະກັນກັບບຸກຄົນອື່ນ ຫຼື ສະຖາບັນການເງິນ ຫຼື ໃຫ້ຮ່ວມທຶນ, ໃຫ້ເຊົ່າ, ຊື້-ຂາຍສິດໃຊ້ທີ່ດິນ, ໃຫ້ສືບທອດສັນຍາເຊົ່າທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ ສຳລັບຜູ້ເຊົ່າ ຫຼື ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ເປັນເຈົ້າກຳມະສິດກ່ຽວກັບຕຶກ, ອາຄານ ຫຼື ສິ່ງປຸກສ້າງໃນທີ່ດິນດັ່ງກ່າວ ເປັນຕົ້ນແມ່ນສິດໂອນໃຫ້ຄົນພາຍໃນ ຫຼື ຕ່າງປະເທດໄດ້; ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນເອງຖືກອັບປະໂຫຍດໃນການລົງທຶນ; ການໄດ້ຮັບສິດ ແລະ ຜົນປະໂຫຍດອື່ນຕາມທີ່ໄດ້ກຳນົດລະບຽບກົດໝາຍ.

ນອກຈາກນັ້ນ, ຜູ້ລົງທຶນຍັງຈະໄດ້ຮັບສິດອື່ນໆທີ່ກຳນົດໄວ້ໃນກົດໝາຍເຊັ່ນ:

- ສິດໃນການຄຸ້ມຄອງ-ບໍລິຫານກິດຈະການຂອງຕົນ;
- ສິດໃນການວ່າຈ້າງງານ, ສິດໃນການຢູ່ອາໄສສຳລັບຜູ້ລົງທຶນຕ່າງປະເທດ;
- ສິດຂອງຜູ້ລົງ ທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ[1].

<u>**ໃສ່ໃຈ:**</u>

**+ ສິດໃນການຄຸ້ມຄອງບໍລິຫານກິດຈະການການລົງທຶນຂອງຕົນ**

1) ວາງແຜນການໃນການລົງທຶນຂອງຕົນ;

2) ຈັດຫາ ແລະ ນຳໃຊ້ວັດຖຸ, ອຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຢີຕ່າງໆ ເຂົ້າໃນການລົງທຶນຂອງຕົນ;

3) ເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ;

4) ຄຸ້ມຄອງແຮງງານໃຫ້ມີຄວາມປອດໄພ ແລະ ມີຄວາມສະດວກໃນການເຄື່ອນໄຫວທຸລະກິດຂອງຕົນ;

5) ດຳເນີນກອງປະຊຸມເພື່ອປຶກສາຫາລືກ່ຽວກັບການລົງທຶນຂອງຕົນ;

6) ມອບ-ໂອນ, ຖອນທຶນ ຫຼື ເພີ່ມທຶນຂອງວິສາຫະກິດ ແລະ ມອບໝາຍໃຫ້ຜູ້ລົງທຶນອື່ນດຳເນີນທຸລະກິດ ແທນເປັນການຊົ່ວຄາວ;

7) ສະເໜີຕໍ່ອົງການທີ່ກ່ຽວຂ້ອງເພື່ອພິຈາລະນາກ່ຽວກັບການໂຈະ, ຍົກເລີກ ຫຼື ຫັນວິສາຫະກິດຂອງຕົນໄປສູ່ຮູບແບບຂອງວິສາຫະກິດອື່ນ.

**+ ສິດໃນການຢູ່ອາໄສສຳລັບຜູ້ລົງທຶນຕ່າງປະເທດ**

---

[1] ກົດໝາຍສົ່ງເສີມການລົງທຶນປີ 2016,ພາກທີVI, ໝວດທີ 1, ມາດຕາ 68-71

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວມີສິດອາໄສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາ ຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດມີສິດອາໄສຢູ່ດິນແດນຂອງ ສປປ ລາວ ຕາມສັນຍາວ່າຈ້າງແຮງງານ.

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ, ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດໄດ້ຮັບຄວາມສະດວກໃນການເຂົ້າ-ອອກ ສປປ ລາວ ລວມທັງການຂໍວີຊ່າ ເຂົ້າອອກຫຼາຍເທື່ອ ຊຶ່ງແຕ່ລະຄັ້ງບໍ່ໃຫ້ເກີນ 5 ປີ.

**+ ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ມີສິດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນກຳໄລຈາກການລົງທຶນ, ເງິນ ແລະ ຊັບສິນຕ່າງໆ ທີ່ເປັນກຳມະສິດສ່ວນຕົວ ຫຼື ຂອງວິສາຫະກິດອອກໄປຕ່າງປະເທດ ໂດຍຜ່ານທະນະຄານທີ່ຕັ້ງຢູ່ ສປປ ລາວ ແລະ ອີງການຈັດຕັ້ງລັດທີ່ກ່ຽວຂ້ອງພາຍຫຼັງທີ່ໄດ້ປະຕິບັດພັນທະດ້ານພາສີ-ອາກອນ ແລະ ຄ່າທຳນຽມໃຫ້ລັດຢ່າງຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ.

**3. ພັນທະຂອງຜູ້ລົງທຶນ**

ໃນການປະຕິບັດພັນທະນັ້ນ, ຜູ້ລົງທຶນຕ້ອງໄດ້ໃສ່ໃຈຕໍ່ຂໍ້ກັບນົດຂອງກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ:

1) ປະຕິບັດຕາມຂໍ້ກຳນົດຂອງກົດໝາຍ ກ່ຽວກັບລະບຽບການລົງທຶນ, ປະຕິບັດເຄື່ອນໄຫວລົງຕາມເນື້ອໃນຈົດທະບຽນລົງທຶນ, ເນື້ອໃນທີ່ກຳນົດໃນໃບຢັ້ງຢືນການລົງທຶນ (ໃບທະບຽນວິສາຫະກິດ).

2) ຜູ້ລົງທຶນຕ້ອງຮັບຜິດຊອບ ດ້ານລັກສະນະຄວາມກະຈ່າງແຈ້ງ, ຊື່ສັດຂອງເນື້ອໃນ ຈົດທະບຽນລົງທຶນ ແລະ ສອດຄ່ອງກັບກົດໝາຍຂອງນິຕິກຳຢັ້ງຢືນ.

3) ປະຕິບັດຢ່າງຄົບຖ້ວນພັນທະດ້ານການເງິນຕາມຂໍ້ກຳນົດຂອງກົດໝາຍ.

4) ປະຕິບັດຕາມຂໍ້ກຳນົດຂອງກົດໝາຍກ່ຽວກັບບັນຊີ, ການກວດສອບບັນຊີ ແລະ ສະຖິຕິ.

5) ປະຕິບັດພັນທະຕາມກົດໝາຍວ່າດ້ວຍປະກັນໄພ, ແຮງງານ, ເຄົາລົບກຽດສັກສີ, ຮັບປະກັນສິດຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງງານ.

6) ເຄົາລົບ, ສ້າງເງື່ອນໄຂຄວາມສະດວກເພື່ອໃຫ້ຜູ້ອອກແຮງງານສ້າງຕັ້ງ, ເຂົ້າຮ່ວມການຈັດຕັ້ງສັງຄົມອື່ນໆ.

7) ປະຕິບັດຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍສິ່ງແວດລ້ອມ.

8) ແລະປະຕິບັດຕາມຂໍ້ກຳນົດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະອື່ນໆ.

ພັນທະຂອງຜູ້ລົງທຶນໄດ້ກຳນົດລະອຽດໃນກົດໝາຍສົ່ງເສີມການລົງທຶນປີ 2016 ເຊັ່ນ: ພັນທະຂອງຜູ້ລົງທຶນທີ່ຕອງປະຕິບັດຕໍ່ລັດ, ພັນທະດ້ານສັງຄົມ ແລະ ພັນທະດ້ານສິ່ງແວດລ້ອມ[2].

**ໃສ່ໃຈ:**

**+ ພັນທະພື້ນຕໍຂອງຜູ້ລົງທຶນ**

1) ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີຂອງລາວ ໃນກໍລະນີທີ່ຈຳເປັນ ກໍ່ສາມາດນຳໃຊ້ລະບົບບັນຊີອື່ນທີ່ສາກົນຮັບຮູ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການ ການເງິນຂອງສປປ ລາວ;

[2] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທVI, ໝວດທີ 1, ມາດຕາ 72-74

2) ເສັຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຢ່າງຄົບຖ້ວນ ແລະ ທັນເວລາ;

3) ປະຕິບັດລະບອບປະກັນໄພ ແລະ ປະກັນສັງຄົມ ຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມລະບຽບ ກົດໝາຍ, ສົ່ງເສີມການນຳໃຊ້ແຮງງານລາວ, ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຢີ ໃຫ້ແກ່ຜູ້ອອກແຮງງານລາວ;

4) ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ ໂດຍສະເພາະ ແມ່ນອົງການຈັດຕັ້ງກຳມະບານ;

5) ປະສານງານກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດທົດແທນຄ່າເສັຍຫາຍທີ່ທຸລະກິດຂອງຕົນໄດ້ກໍ່ຂຶ້ນ, ປະກອບສ່ວນແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນ

ເຂດໂຄງການຂອງຕົນ.

**+ ພັນທະໃນການປົກປັກຮັກສາສິ່ງແວດລ້ອມ**

ຜູ້ລົງທຶນມີສິດໃນການປົກປັກຮັກສາ, ພັດທະນາສິ່ງແວດລ້ອມ, ຮັບປະກັນບໍ່ໃຫ້ດຳເນີນທຸລະກິດມີຜົນກະ ທົບຢ່າງຫຼວງຫຼາຍຕໍ່ສາທາລະນະຊົນ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສຸຂະພາບຂອງ ຜູ້ອອກແຮງງານ ໃນກໍລະນີທີ່ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນມີພັນທະປະຕິບັດມາດຕະການທີ່ຈຳເປັນເພື່ອ ແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມລະບຽບກົດໝາຍ.

**+ ພັນທະດ້ານສັງຄົມຂອງຜູ້ລົງທຶນ:**

1) ປະຕິບັດລະບຽບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2) ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໃນວິສາຫະກິດຂອງຕົນໂດຍສະເພາະແມ່ນອົງການຈັດຕັ້ງກຳມະບານ;

3) ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;

4) ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບຈາກການດຳເນີນທຸລະກິດຂອງຕົນ;

5) ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະ ນາທ້ອງຖິ່ນໃນເຂດໂຄງການຂອງຕົນ;

6) ປະກອບສ່ວນທາງດ້ານງົບປະມານໃນວຽກງານພັດທະນາສັງຄົມ;

7) ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**+ ພັນທະດ້ານສິ່ງແວດລ້ອມຂອງຜູ້ລົງທຶນ:**

1) ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືຄວາມສຳຄັນການປົກປັກຮັກສາສະພາບແວດລ້ອມຕາມກົດໝາຍ ແລະ ລະບຽບການ;

2) ກໍລະນີເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນມີພັນທະປະຕິບັດມາດຕະການທີ່ຈຳເປັນເພື່ອແກ້ໄຂສະພາບການດັ່ງກ່າວທັນການຕາມກົດໝາຍ ແລະ ລະບຽບການ;

3) ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

4) ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

+ **ພັນທະຂອງຜູ້ລົງທຶນຕໍ່ລັດ:**

1) ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2) ຖືບັນຊີຕາມກົດໝາຍວ່າດ້ວຍບັນຊີຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການເງິນ ຂອງ ສປປ ລາວ;

3) ໃຫ້ຄວາມຮ່ວມມື ແລະ ປະສານງານເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນໃນການເຄື່ອນໄຫວວຽກງານທຸລະກິດ;

4) ສົ່ງເສີມການນຳໃຊ້ແຮງງານລາວໂດຍສະເພາະແຮງງານແມ່ຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະ ນາສີມືແຮງງານ ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;

5) ປະກອບສ່ວນດ້ານງົບປະມານໃນວຽກງານຕິດຕາມ, ກວດກາໂຄງການລົງທຶນປະຈຳປີ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ- One Stop Service ແລະ ຂະແໜງການທີ່ກ່ຽວຂ້ອງ;

6) ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**4. ຄວາມຮູ້ເພີ່ມເຕີມກ່ຽວກັບ ສິດ ແລະ ພັນທະຂອງຜູ້ປະກອບການຜ່ານແດນອາຊີອາຊຽນ** ( ASEAN CUSTOMS TRANIT SYSTEM ) (ACTS)

ບັນຫາການຂົນສົ່ງສິນຄ້າຜ່ານ ເປັນປັດໃຈທີ່ຕິດພັນກັບການເຄື່ອນໄຫວລົງທຶນ. ສະນັ້ນ, ສິດ ແລະ ພັນທະຂອງຜູ້ປະກອບການຜ່ານແດນອາຊຽນ ກໍເປັນບັນຫາໜຶ່ງທີ່ຜູ້ລົງທຶນຄວນໄດ້ສຶກສາ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

+ **ຜູ້ປະກອບການຜ່ານແດນຂອງ ສປປ ລາວ**

ຜູ້ປະກອບການຜ່ານແດນຂອງ ສປປ ລາວ ມີເງື່ອນໄຂ ແລະ ມາດຕະຖານດັ່ງນີ້:

1) ມີໃບທະບຽນວິສາຫະກິດ ໃບອະນຸຍາດດຳເນີນທຸລະກິດທີ່ອອກໂດຍຂະແໜງຂົນສົ່ງຂອງຂະແໜງອຸດສາຫະກຳ ແລະ ການຄ້າ;

2) ເປັນບໍລິສັດທີ່ເຂົ້າໃນລະບົບອາກອນມູນຄ່າເພີ່ມ ແລະ ມີໃບຢັ້ງຢືນການມອບພັນທະອາກອນປະຈຳປີ;

3) ມີຖານະການເງິນເພື່ອສາມາດຄ້ຳປະກັນຕໍ່ລັດຖະການພາສີ ຕາມກົດໝາຍພາສີ;

4) ຕ້ອງບໍ່ຖືກດຳເນີນຄະດີທາງພາສີ ແລະ/ຫຼື ບໍ່ຖືກລົງໂທດໃນການກະທຳຜິດທາງພາສີ ເປັນເວລາ 03 ປີ;

5) ຕ້ອງມີພາຫະນະຂົນສົ່ງຜ່ານແດນທີ່ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ແລະ ສອດຄ່ອງກັບອານຸສັນຍາ ( ໃນບັນຊີ 500 ຄັນ ) ແລະ ອານະສັນຍາ 4 ( ສະພາບເຕັກນິກ ) ຕາມຂໍ້ຕົກລົງການອໍານວຍຄວາມສະດວກສິນຄ້າຜ່ານແດນອາຊຽນ;

6) ຕ້ອງປະຕິບັດຕາມເງື່ອນໄຂຂອງອາຊຽນຕາມແຕ່ລະໄລຍະ.

+ **ສິດ ແລະ ພັນທະຂອງຜູ້ປະກອບການຜ່ານແດນ**

ຜູ້ປະກອບການຜ່ານແດນມີສິດ ແລະ ພັນທະຕາມຄໍາແນະນໍາຂອງລັດຖະມົນຕີກະຊວງການເງິນດັ່ງນີ້:[3]

1) ປະຕິບັດຕາມລະບຽບການ ແລະ ຂັ້ນຕອນການຜ່ານແດນອາຊຽນຕາມຄໍາແນະນໍາຂອງກະຊວງການເງິນ;

2) ດໍາເນີນການແຈ້ງພາສີຜ່ານແດນ ແລະ ການກວດປ່ອຍສິນຄ້າ ຢູ່ບັນດາດ່ານພາສີສາກົນ ບ່ອນນໍາເຂົ້າ ແລະ ດ່ານພາສີສາກົນ ບ່ອນສົ່ງອອກຂອງ ສປປ ລາວ ຕາມທີ່ລະບຽບການໄດ້ກໍານົດໄວ້;

3) ປະກອບເອກະສານ ແລະ ຂໍ້ມູນອື່ນໆກ່ຽວກັບສິນຄ້າຜ່ານແດນໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍພາສີ;

4) ຕ້ອງມີການຄໍ້າປະກັນຈາກຜູ້ຄໍ້າປະກັນ ເປັນຕົ້ນແມ່ນທະນາຄານ;

5) ຊໍາລະຄ່າທໍານຽມ ແລະ ຄ່າທໍານຽມ ຕາມລະບຽບການຂອງ ສປປ ລາວ;

6) ໃນກໍລະນີມີການລະເມີດລະບຽບການຜ່ານແດນ, ຜູ້ປະກອບການຕ້ອງໄດ້ຊໍາລະຄ່າພາສີ ແລະ ຄ່າປັບໃໝຢ່າງຄົບຖ້ວນຕາມກົດໝາຍ, ຖ້າຫາກຜູ້ປະກອບການຫຼົບຫຼີກ, ບໍ່ປະຕິບັດຕາມສັນຍາ ຜູ້ຄໍ້າປະກັນຕ້ອງໄດ້ຊໍາລະຄ່າພາສີ ແລະ ຄ່າປັບໃໝຢ່າງຄົບຖ້ວນຕາມກົດໝາຍ;

7) ການຜ່ານແດນຕ້ອງໄດ້ນໍາໃຊ້ເສັ້ນທາງສະເພາະ ແລະ ດ່ານພາສີສາກົນເປົ້າໝາຍ ທີ່ກໍານົດໃນອານຸສັນຍາ 1 ແລະ 2 ຂອງຂໍ້ຕົກລົງການອໍານວຍຄວາມສະດວກສິນຄ້າຜ່ານແດນອາຊຽນ;

8) ຕ້ອງໄດ້ຮັບເງິນຄໍ້າປະກັນຄືນຈາກຜູ້ຄໍ້າປະກັນ ພາຍຫຼັງທີ່ລັດການພາສີກ່ຽວຂ້ອງຢັ້ງຢືນວ່າການຂົນສົ່ງຜ່ານແດນໄດ້ສິ້ນສຸດລົງ.

+ **ສິດ ແລະ ພັນທະຂອງຜູ້ຄໍາປະກັນ**

ຜູ້ຄໍ້າປະກັນມີສິດ ແລະ ພັນທະດັ່ງນີ້:[4]

1) ຕ້ອງມີການຄໍ້າປະກັນຂອງທະນາຄານ ຕາມແບບຟອມເອກະພາບຂອງອາຊຽນ ( ASEAN CUSTOMS TRANSIT SYSTEM GUARANTEE DOCUMENT ) ໃຫ້ແກ່ການຂົນສົ່ງສິນຄ້າຜ່ານແດນຕາມລະບຽບການຜ່ານແດນພາສີອາຊຽນ(ACTS);

2) ກໍລະນີລະເມີດລະບຽບການຂົນສົ່ງຜ່ານແດນຢູ່ປະເທດໃດໜຶ່ງ ແລະ ລັດຖະການພາສີຂອງປະເທດດັ່ງກ່າວສົ່ງໜັງສືຮຽກເກັບໜີ້ຕໍ່ຜູ້ຄໍ້າປະກັນຢ່າງເປັນທາງການ, ຜູ້ຄໍ້າປະກັນຕ້ອງຊໍາລະໜີ້ຕາມຈໍານວນເງິນ ຄ່າພາສີ-ອາກອນ ແລະ ປັບປໃໝ ທີ່ຜູ້ປະກອບການຕ້ອງຊໍາລະຢ່າງຖືກຕ້ອງຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ ຂອງປະເທດນັ້ນ;

3) ຜູ້ຄໍ້າປະກັນ (ທະນາຄານ) ກ່ອນຫຼື ຫຼັງການຊໍາລະໜີ້ຄ່າພາສີ-ອາກອນ ແລະ ປັບໃໝ ຕ້ອງແຈ້ງຕໍ່ ລັດຖະການພາສີທີ່ກ່ຽວຂ້ອງຢັ້ງຢືນວ່າການຂົນສົ່ງຜ່ານແດນໄດ້ສິ້ນສຸດລົງ.

**References:**

---

[3] ຄໍາແນະນໍາຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 3143/ກງ, ລົງວັນທີ 26 ພະຈິກ 2020, ມາດຕາ 6.

[4] ຄໍາແນະນໍາຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 3143/ກງ, ລົງວັນທີ 26 ພະຈິກ 2020, ມາດຕາ 7.

1. ກົດໝາຍສົ່ງເສີມການລົງທຶນ 2016;

2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;

3. ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 3143/ກງ, ລົງວັນທີ 26 ພະຈິກ 2020 ວ່າດ້ວຍການຈັດຕັ້ງປະຕິບັດລະບົບຜ່ານແດນພາສີອາຊຽນ (ASEAN CUSTOMS TRANSIT SYSTEM)